ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0369/ອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 26 FEB 2016

# ຂໍ້ຕົກລົງ
## ວ່າດ້ວຍການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ດຳເນີນການສົ່ງອອກສິນຄ້າທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ໄດ້ຮັບສິດທິພິເສດ ແນໃສ່ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສາກົນ.

**ມາດຕາ 2 ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ຂຽນຫຍໍ້ເປັນພາສາອັງກິດວ່າ: e-CO ແມ່ນການດຳເນີນການແຈ້ງເອກະສານທາງເອເລັກໂຕຣນິກ ເພື່ອສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ທີ່ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກຢູ່ ສປປ ລາວ.

## ໝວດທີ II
## ເງື່ອນໄຂ ແລະ ຂັ້ນຕອນ
## ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ

**ມາດຕາ 4 ເງື່ອນໄຂຂອງຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ຜະລິດ ຫຼື ຜູ້ສົ່ງອອກສິນຄ້າ ທີ່ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
2. ມີປະຫວັດທີ່ດີໃນການປະຕິບັດຕາມລະບຽບການ ແລະ ຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.

**ມາດຕາ 5 ຂັ້ນຕອນຂອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກອບເອກະສານຕາມທີ່ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລ້ວສົ່ງໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ເພື່ອລົງທະບຽນຂໍສິດໃນການສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ;
2. ປະກອບເອກະສານຕາມທີ່ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລ້ວສົ່ງໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ.

**ມາດຕາ 6 ການລົງທະບຽນ ເພື່ອຂໍສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກ ໂຕຣນິກ**

ການລົງທະບຽນ ເພື່ອຂໍສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ແມ່ນປະກອບເອກະສານສົ່ງໃຫ້ອົງການຄຸ້ມຄອງວຽກງານດັ່ງກ່າວ ທາງເອເລັກໂຕຣນິກ ໂດຍຜ່ານເວບໄຊ໌ www.ecolao.gov.la.

ເອກະສານທີ່ຕ້ອງປະກອບ ແລະ ສົ່ງໃຫ້ອົງການຄຸ້ມຄອງມີດັ່ງນີ້:

1. ຕື່ມຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມແບບຟອມທີ່ກຳນົດໄວ້ໃນລະບົບ e-CO;
2. ສຳເນົາເອກະສານເປັນໄຟລ໌ PDF ປະກອບມີ: ໃບທະບຽນວິສາຫະກິດ; ໃບຢັ້ງຢືນການມອບພັນທະອາກອນປະຈຳປີ; ໜັງສືແຈ້ງແບບຢ່າງລາຍເຊັນ ແລະ ກາປະທັບ; ແລະ ໃບແຈ້ງຂີດຄວາມສາມາດໃນການສົ່ງອອກປະຈຳປີ.

**ມາດຕາ 7 ວິທີການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ພາຍຫຼັງໄດ້ຮັບສິດເປັນຜູ້ມີເງື່ອນໄຂອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກແລ້ວ ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ສາມາດປະກອບເອກະສານສົ່ງໃຫ້ອົງການຄຸ້ມຄອງວຽກງານດັ່ງກ່າວ ທາງເອເລັກໂຕຣນິກ ໂດຍຜ່ານເວັບໄຊ໌ www.ecolao.gov.la ເພື່ອສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນການສົ່ງອອກສິນຄ້າແຕ່ລະຄັ້ງ ໂດຍມີເອກະສານ ດັ່ງນີ້:

1. ຕື່ມຂໍ້ມູນຕາມແບບຟອມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ກໍານົດໄວ້ໃນລະບົບ e-CO;
2. ສໍາເນົາເອກະສານເປັນໄຟລ໌ PDF ປະກອບມີ: ໃບຄໍາຮ້ອງ; ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າ; ໃບແຈ້ງພາສີເປັນລາຍລະອຽດ; ແລະ ໃບຂົນສົ່ງ.

ພາຍຫຼັງໄດ້ຮັບແຈ້ງຕອບທາງເອເລັກໂຕຣນິກ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ຜູ້ສະເໜີອອກ e-CO ຕ້ອງພິມແບບຟອມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າອອກມາ ແລະ ລົງລາຍເຊັນພ້ອມປະທັບກາຂອງບໍລິສັດ/ໂຮງງານ ແລ້ວສົ່ງເອກະສານສະບັບຕົ້ນ ໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ.

**ມາດຕາ 8 ການພິຈາລະນາອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ**

ການພິຈາລະນາອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ ມີຂັ້ນຕອນດັ່ງນີ້:

1. ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ ຕ້ອງແຈ້ງຕອບ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ທັນທີ ຫຼື ຊ້າສຸດບໍ່ໃຫ້ກາຍ 1 ວັນລັດຖະການ. ໃນກໍລະນີເອກະສານຂໍອອກ e-CO ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຮັບຮູ້ ແລະ ແນະນໍາໃຫ້ປັບປຸງເພື່ອໃຫ້ຖືກຕ້ອງ ແລະ ຄົບຖ້ວນ ແລ້ວສົ່ງຄືນໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ;
2. ພາຍຫຼັງໄດ້ຮັບເອກະສານສະບັບຕົ້ນທີ່ມີລາຍເຊັນ ແລະ ຕາປະທັບຂອງບໍລິສັດ/ໂຮງງານ ແລ້ວອົງການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ ຕ້ອງອອກໃບຢັ້ງຢືນແຫຼ່ງກໍາເນີນສິນຄ້າ ໃຫ້ທັນທີ ຫຼື ຊ້າສຸດບໍ່ໃຫ້ກາຍ 1 ວັນລັດຖະການ.

## ໝວດທີ III
## ສິດ ແລະ ພັນທະຂອງຜູ້ສະເໜີ

**ມາດຕາ 9 ສິດຂອງຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ**

ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ ມີສິດ ດັ່ງນີ້:

1. ລົງທະບຽນເພື່ອຂໍສິດໃນການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ;
2. ເລືອກໃຊ້ວິທີການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ໃນຮູບແບບຜ່ານເອເລັກໂຕຣນິກ ຫຼື ບໍ່ຜ່ານເອເລັກໂຕຣນິກ;
3. ມີສິດອື່ນຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 ພັນທະຂອງຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ**

ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ ມີພັນທະ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງ ແລະ ຊັດເຈນຂອງຂໍ້ມູນທາງເອເລັກໂຕຣນິກທີ່ໄດ້ເຊັນໃນເອກະສານ ສະເໜີອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຣນິກ;